ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

=======❖❖❖=======

240

ກະຊວງສາທາລະນະສຸກ

ເລກທີ................/ສທ

ນະຄອນຫຼວງວຽງຈັນ, ວັນທີ......................07 JUL 2016

# ແຈ້ງການ

ເຖິງ: ທ່ານ ຫົວໜ້າ ອຳນວຍການໂຮງງານຜະລິດຢາ ແລະ ບໍລິສັດ ຂາອອກ-ຂາເຂົ້າ ດ້ານຢາ ແລະ ຜະລິດຕະພັນການແພດ ໃນທົ່ວປະເທດ.

ເລື່ອງ: ການຂຶ້ນທະບຽນຢາທີ່ມີຄວາມຕ້ອງການນຳໃຊ້ໃນຕາໜ່າງສາທາລະນະສຸກ ຂອງ ສປປ ລາວ

- ອີງຕາມ ນະໂຍບາຍແຫ່ງຊາດດ້ານຢາ (ສະບັບປັບປຸງ) ປີ 2003
- ອີງຕາມ ກົດໝາຍວ່າດ້ວຍຢາ ແລະ ຜະລິດຕະພັນການແພດ ສະບັບປັບປຸງ ເລກທີ 07/ສພຊ. ລົງວັນທີ 21 ທັນວາ 2011
- ອີງຕາມ ຂໍ້ກຳນົດວ່າດ້ວຍການຂຶ້ນທະບຽນຢາ ເລກທີ 1441/ກຊສ, ລົງວັນທີ 13/08/2003
- ອີງຕາມ ຂໍ້ຕົກລົງຂອງທ່ານລັດຖະມົນຕີກະຊວງສາທາລະນະສຸກ ສະບັບເລກທີ 119/ກຊສ, ລົງວັນທີ 21/01/2009 ວ່າດ້ວຍການແຕ່ງຕັ້ງຄະນະກຳມະການຈັດຊື້ຢາ ແລະ ຜະລິດຕະພັນການແພດຮ່ວມກັນ

ຜ່ານການຈັດຕັ້ງປະຕິບັດການຈັດຊື້-ຈັດຫາ, ການສະໜອງຢາ ແລະ ຜະລິດຕະພັນການແພດ ຂອງກະຊວງສາທາ ລະນະສຸກ ກໍ່ຄືຢູ່ໃນບັນດາແຂວງ-ນະຄອນ ໃນທົ່ວປະເທດ ເຊິ່ງໄດ້ຈັດຊື້ແບບຮ່ວມກັນ ເລີ່ມຕົ້ນຈັດຕັ້ງປະຕິບັດນັບແຕ່ ປີ 2011 ເປັນຕົ້ນມາ. ໃນຕ່ອງໂສ້ການສະໜອງ ແລະ ຄວາມຕ້ອງການຢາ ແລະ ຜະລິດຕະພັນການແພດ ເພື່ອນຳໃຊ້ເຂົ້າໃນ ວຽກງານບໍລິການດ້ານສຸຂະພາບ ຂອງປະຊາຊົນບັນດາເຜົ່າ ເຫັນວ່າໃນໄລຍະຜ່ານມາມີຢາຈຳນວນໜຶ່ງຍັງບໍ່ທັນຂຶ້ນທະບຽນຕາມລະບຽບການ ແຕ່ໄດ້ສະເໜີເຂົ້າມາໃນລະບົບການຈັດຊື້ຈັດຫາຢາຂອງໂຮງໝໍ (ລາຍການລະອຽດບັນດາຢາດັ່ງກ່າວຕາມເອກະສານຄັດຕິດ).

ເພື່ອສົ່ງເສີມການຈັດຕັ້ງປະຕິບັດໃຫ້ສອດຄ່ອງຕາມລະບຽບການຄຸ້ມຄອງດ້ານຢາ ແລະ ຮັບປະກັນດ້ານຄຸນນະພາບ, ປະສິດທິພາບ, ຄວາມປອດໄພ ແລະ ແຫຼ່ງທີ່ມາຢ່າງຖືກຕ້ອງ, ກະຊວງສາທາລະນະສຸກ ມີຄວາມຍິນດີ ແຈ້ງມາຍັງບັນດາທ່ານ ຜູ້ປະກອບການດ້ານຢາໃນຂອບເຂດທົ່ວປະເທດເພື່ອຊາບ ດັ່ງລຸ່ມນີ້:

- ສະເໜີທ່ານໃຫ້ຄວາມຮ່ວມມືໃນການນຳເອົາຢາດັ່ງກ່າວມາຂຶ້ນທະບຽນ ນຳກົມອາຫານ ແລະ ຢາ ກະຊວງສາທາລະນະສຸກ ແລະ ປະກອບສ່ວນໃນການສະໜອງຢາດັ່ງກ່າວ ເພື່ອນຳໃຊ້ເຂົ້າໃນຕາໜ່າງສາທາລະນະສຸກຂອງ ສປປ ລາວ, ໂດຍການ ເຂົ້າຮ່ວມໃນການປະມູນ, ຈັດຊື້ຢາໃຫ້ໂຮງໝໍໃນແຕ່ລະປີ
- ກໍລະນີ ບໍລິສັດ/ໂຮງງານຜະລິດຢາ ບໍ່ນຳເອົາຜະລິດຕະພັນຢາດັ່ງກ່າວມາຂຶ້ນທະບຽນ ກໍ່ຈະບໍ່ສາມາດສະເໜີເຂົ້າມາໃນລະບົບປະມູນຈັດຊື້-ຈັດຫາຢາໃນແຕ່ລະປີໄດ້

ດັ່ງນັ້ນ, ຈຶ່ງແຈ້ງມາຍັງທ່ານເພື່ອຊາບ ແລະ ຫວັງຢ່າງຍິ່ງວ່າຈະໄດ້ຮັບຄວາມຮ່ວມມືຈາກບັນດາທ່ານຕາມທາງຄວນ.

ລັດຖະມົນຕີກະຊວງສາທາລະນະສຸກ

ຣສ.ດຣ. ບຸນກອງ ສີຫາວົງ